ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 001 /ຈນວ

ວັນທີ 07 ກຸມພາ 2020

# ຄຳສັ່ງ

ເຖິງ: - ທ່ານເຈົ້າເມືອງ, ທ່ານຫົວໜ້າພະແນກການ-ອົງການທຽບເທົ່າ ທົ່ວນະຄອນຫຼວງວຽງຈັນ.

- ທ່ານຫົວໜ້າຫ້ອງການ ສຳນັກງານ-ອົງການ, ຜູ້ອຳນວຍການບໍລິສັດ, ປະຊາຊົນຊາວລາວ ແລະ ຊາວຕ່າງປະເທດ ທີ່ອາໄສຢູ່ນະຄອນຫຼວງວຽງຈັນ.

ເລື່ອງ: ໃຫ້ເພີ່ມທະວີຄວາມຮັບຜິດຊອບສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂ**ເຫດການຈູດຂີ້ເຫຍື້ອ ຈູດປ່າ ແລະ ຈູດທົ່ງນາເຮືອກສວນຊະຊາຍ** ໃນພື້ນທີ່ຂອງຕົນເອງ.

ໂດຍສັງເກດເຫັນວ່າ ນະຄອນຫຼວງວຽງຈັນ ເປັນເມືອງໜຶ່ງພວມພັດທະນາໄປໃນທ່ວງທ່າທີ່ດີ, ເປັນເມືອງທີ່ໜ້າຢູ່ (ສະຫງົບສຸກ, ສະອາດ, ສີຂຽວ...) ແລະ ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໃນລະດັບດີ. ແຕ່ພ້ອມດຽວກັນນັ້ນ ກໍ່ເຫັນວ່ານະຄອນຫຼວງວຽງຈັນຂອງພວກເຮົາ ຍັງມີຫຼາຍບັນຫາດ້ານສິ່ງແວດລ້ອມທີ່ຕ້ອງໄດ້ແກ້ໄຂ, ເປັນຕົ້ນ ໃນລະດູແລ້ງປີ 2019 ໄດ້ມີເຫດການໝອກຄວັນ PM 2,5 ເກີນຄ່າມາດຕະຖານ ອັນເກີດຈາກການຈູດປ່າ, ທົ່ງນາເຮືອກສວນ ແລະ ຈູດຂີ້ເຫຍື້ອຊະຊາຍ; ສຳພັດໃນລະດູແລ້ງປີນີ້ ສັງເກດເຫັນວ່າດິນຟ້າອາກາດມີຄວາມແຫ້ງແລ້ງກວ່າປີຜ່ານມາ, ໃນສະພາບການດັ່ງກ່າວ ຖ້າພວກເຮົາຫາກຍັງເມີນເສີຍ, ປະປ່ອຍລະຫຼວມ ແລະ ຂາດຄວາມຮັບຜິດຊອບ ກໍ່ຍິ່ງຈະເຮັດໃຫ້ມີໝອກຄວັນເກີນຄ່າມາດຕະຖານປົກກຸມ, ອາຍພິດລະພິດອາດເພີ່ມຂຶ້ນ ແລະ ຈະກະທົບເຖິງສຸຂະພາບພາລະນາໄມຂອງປະຊາຊົນ ລວມເຖິງກະທົບຕໍ່ພາບພົດຂອງນະຄອນຫຼວງ ຢ່າງຫຼີກລ່ຽງບໍ່ໄດ້. ເພື່ອຮັບມືກັບເຫດການດັ່ງກ່າວທີ່ອາດຈະເກີດຂຶ້ນໃນລະດູແລ້ງປີ 2020 ໃຫ້ໄດ້ຮັບຜົນດີ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງ:

1. ໃຫ້ທຸກເມືອງ, ທຸກບ້ານ, ສຳນັກງານ-ອົງການ, ບໍລິສັດ ແລະ ປະຊາຊົນ ຜູ້ທີ່ດຳລົງຊີວິດຢູ່ນະຄອນຫຼວງວຽງຈັນຈົ່ງ**ເພີ່ມທະວີຄວາມຮັບຜິດຊອບໃນການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການຈູດຂີ້ເຫຍື້ອ, ການຈູດປ່າ ແລະ ຈູດທົ່ງນາເຮືອກສວນຊະຊາຍ** ທັງໃນເຂດຕົວເມືອງ ແລະ ເຂດຊານເມືອງ ໃຫ້ໄດ້ຢ່າງທັນການ; ເມື່ອມີເຫດການເກີດຂຶ້ນຢູ່ບ່ອນໃດ ໃຫ້ຫົວໜ້າອົງກອນຢູ່ບ່ອນນັ້ນ ເປັນຜູ້ຮັບຜິດຊອບຄວບຄຸມ ແລະ ແກ້ໄຂໂດຍກົງ.

2. **ມາດຕະການໃນການສະກັດກັ້ນ, ຄວບຄຸມເຫດການໄຟໄໝ້ ແລະ ອາຍຄວັນ** ທີ່ອາດຈະເກີດຂຶ້ນ ໃຫ້ປະຕິບັດຕາມກົດໝາຍກ່ຽວຂ້ອງກຳນົດໄວ້ ຢ່າງເຂັ້ມງວດ ຄື:

2.1. ໃຫ້ຈັດຕັ້ງປະຕິບັດ **ຂໍ້ຫ້າມບໍ່ໃຫ້ຈູດຂີ້ເຫຍື້ອຊະຊາຍ,** ຊຶ່ງໄດ້ກຳນົດໄວ້ໃນມາດຕາ 68, ຂໍ້ທີ 3, 4 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.

2.2. **ຂໍ້ຫ້າມບໍ່ໃຫ້ຈູດປ່າ ແລະ ຈູດທົ່ງນາເຮືອສວນຊະຊາຍ,** ຊຶ່ງໄດ້ກຳນົດໄວ້ໃນມາດຕາ 135, ຂໍ້ທີ 1 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ມາດຕາ 56, ຂໍ້ທີ 11 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ສພຊ, ລົງວັນທີ 24 ທັນວາ 2007.

2.3. ໃຫ້ເພີ່ມທະວີຄວາມຮັບຜິດຊອບຕິດຕາມ, ກວດກາ ແລະ ກຳນົດຈຸດທີ່ເປັນເຊື້ອເພີງ, ກອງຂີ້ເຫຍື້ອ ໃນພື້ນທີ່ຂອງຕົນ, ທັງກຳນົດມາດຕະການປ້ອງກັນ, ກະກຽມເງື່ອນໄຂ ແລະ ຄວາມພ້ອມ ໄວ້ແຕ່ຫົວທີໃຫ້ຄົບຖ້ວນ.

2.4. ໃຫ້ທ່ານເຈົ້າເມືອງ, ນາຍບ້ານ, ຫົວໜ້າສຳນັກງານ-ອົງການ ແລະ ຜູ້ອຳນວຍການ **ເອົາໃຈໃສ່ສຶກສາອົບຮົມພະນັກງານ, ລັດຖະກອນ, ກຳມະກອນ ແລະ ປະຊາຊົນ**ໃນຂອບເຂດຂອງຕົນ ໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງຜົນເສຍຫາຍຂອງການຈູດຂີ້ເຫຍື້ອ, ການຈູດປ່າ, ຈູດທົ່ງນາເຮືອສວນຊະຊາຍ ແລະ ທັງກຳແໜ້ນກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ຢ່າງເລິກເຊິ່ງ, ມີສະຕິຕື່ນຕົວໃນການປ້ອງກັນ ແລະ ເຂົ້າຮ່ວມຂະບວນການແກ້ໄຂອັກຄີໄພ, ອາຍຄວັນ ທີ່ເກີດຂຶ້ນ ໃນຂອບເຂດທີ່ຕົນອາໄສຢູ່ຢ່າງເປັນຂະບວນການ.

3. **ມາດຕະການແກ້ໄຂຕໍ່ຜູ້ກໍ່ໃຫ້ເກີດມີເຫດການໄຟໄໝ້ ແລະ ມີອາຍຄ້ວນມົນລະພິດ,** ສ້າງຄວາມເສຍຫາຍໃຫ້ປະຊາຊົນຢູ່ອ້ອມຂ້າງ ແລະ ສັງຄົມ ໃຫ້ດຳເນີນການກ່າວເຕືອນ ແລະ ດຳເນີນຄະດີທາງແພ່ງ ຫຼື ອາຍາ ຕາມສະຖານໜັກ ຫຼື ເບົາ, ເຊິ່ງກົດໝາຍກ່ຽວຂ້ອງກຳນົດໄວ້, ໃນນັ້ນໃຫ້ເອົາໃຈໃສ່ປະຕິບັດມາດຕາ 69 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ສພຊ, ລົງວັນທີ 24 ທັນວາ 2007; ມາດຕາ 92 ຫາ 97 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012; ມາດຕາ 167 ຫາ 173 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ອື່ນໆ....

4. ໃຫ້ສ້າງຕັ້ງໜ່ວຍງານສະເພາະໜຶ່ງຂຶ້ນເພື່ອແກ້ໄຂບັນຫາສິ່ງແວດລ້ອມ ແລະ ໂທລະສັບສາຍດ່ວນແຈ້ງເຫດການຈູດຂີ້ເຫຍື້ອ ແລະ ຈູດປ່າ ຢູ່ຂັ້ນນະຄອນຫຼວງວຽງຈັນ ແລະ ຂັ້ນເມືອງ, ຢູ່ນະຄອນຫຼວງວຽງຈັນ ໃຫ້ລວມສູນຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍໃຫ້ນຳໃຊ້ເບີໂທ **1168 ທີ່ກຳນົດແລ້ວ, ສຳລັບຢູ່** ຂັ້ນເມືອງ ໃຫ້ລວມສູນຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງເມືອງ, ໜ່ວຍງານສະເພາະ ແລະ ສາຍດ່ວນຕ້ອງເຄື່ອນໄຫວຢ່າງຕັ້ງໜ້າ, ຕ້ອນຮັບການໃຫ້ເບາະແສຂໍ້ມູນ ແລະ ເປັນຜູ້ກຳກັບການແກ້ໄຂເຫດການໄຟໄໝ້ ແລະ ອາຍຄ້ວນ ຕະຫຼອດ 24 ຊົ່ວໂມງ.

5. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເປັນໃຈກາງ ແລະ ເປັນເຈົ້າການອຳນວຍຄວບຄຸມການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເຂັ້ມງວດ ແລະ ບັນລຸຜົນເປັນຢ່າງດີ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

<u>ບ່ອນສົ່ງ:</u>

| | |
|---|---|
| - ບັນດາຫ້ອງການກະຊວງ-ອົງການທຽບເທົ່າ ຂັ້ນກະຊວງ ພາກສ່ວນລະ | 01 ສະບັບ; |
| - ພະແນກການ, ອົງການທຽບເທົ່າພະແນກ ປຄນ ລະ | 01 ສະບັບ; |
| - ເມືອງໆລະ | 01 ສະບັບ; |
| - ບ້ານໆລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |

ປອ.ສິນລະວົງ ຄຸດໄພທູນ